


**ໝັຍຄຳ ພົວພັນຍົນ**

ມີຄືນນຶ່ງ ຜົວເຈົ້າຊູ້ຫົວໄກ່ແຈ້ ໄດ້ອອກຈາກເຮືອນ ເພື່ອໄປທ່ຽວງານປາຣ໌ຕີ້ທີ່ຈັດຂຶ້ນໂດຍສະມາຄົມລາວຮ່ວມເຜົ່າແຫ່ງນຶ່ງ **ແລະ ປ່ອຍໃຫ້ແມ່ບັກທຳແຫລ້**ນອນເຝົ້າເຮືອນຢູ່ກັບລູກນ້ອຍທັງສອງຄົນເພາະໄປຊອກຫາເບບີຊິສນຳມາເທັກແຄຣ໌ບໍ່ໄດ້ ແຕ່ພາຍຫລັງທີ່ງານປາຣ໌ຕີ້ເລີກແລ້ວ ແຕ່ຜົວເຈົ້າກັມຄືນນັ້ນກັບຄວງແຂນເອົາຄູ່ພາດເນີທີ່ເຕັ້ນລຳດ້ວຍກັນນັ້ນໄປທ່ຽວສນຸກສນານຕໍ່ທີ່ກາຊີໂນ່ປາຈັງກ້າຈົນຈໍຮອດ 6 ໂມງເຊົ້າຈຶ່ງຍ່າງຕໍ່ຕິກກັບຂຶ້ນມາເຮືອນ ແລະເງິນທີ່ນຳຕິດຕົວໄປເກືອບສອງພັນກໍກ້ຽງອອດຫລອດແຕ່ພໍໄຂປະຕູກ້າວຂາຢຽບຍ່າງເຂົ້າໄປຍັງບໍ່ພົ້ນປະຕູເຮືອນ ທາງຝ່າຍແມ່ເຈົ້າເຮືອນ ປາກປາແດກກໍກ໊າກສຽງອອກໄປໃສ່ໃນທັນທີທັນທັນໃດກັນນັ້ນໂລດ?

**-ເມັຽທີ່ໜ້າຮັກ :** ບັກຈົນຫາຍ ມຶງໄປໃສມາ ຈົນແຈ້ງ ຈ່າງປ່າງ ຈຶ່ງຄ່ອຍເຫັນໜ້າກັບມາບ້ານ ບອກກູມາ ດຽວນີ້ ???

**-ຜົວຜູ້ໜ້າແຊບ:** ເຮັດຫູໝວກທວນລົມແບບບໍ່ຮູ້ຮ້ອນຮູ້ໜາວແລະກໍບໍ່ປາກຈັກຄວາມ ທາງຝ່າຍເມັຽຈຶ່ງຮ້ອງກາກອອກໄປໃສ່ຕື່ມ ສຽງດັງແຮງຂຶ້ນກວ່າເກົ່າ...

**-ເມັຽທີ່ໜ້າຮັກ:** ບັກຫູໝວກ ກູເວົ້າແຮງຊໍ່ານີ້ມຶງກະບໍ່ໄດ້ຍິນບໍ່? ບັກຜີຕາຍຫ່າມຶງເຫັ້ງຢອກກູຫລືບໍ່ນີ້!!!

**-ຜົວຜູ້ໜ້າແຊບ:** ກູຫູໝວກມັນກະດີແລ້ວເດ່ອີ່ເວນ ! ມັນຈຶ່ງບໍ່ໄດ້ຍິນສຽງປ້ອຍດ່າຂອງມຶງອີ່ເວນເອີຍ

**-ເມັຽທີ່ໜ້າຮັກ:** (ຄຳຕອບນີ້ພັດແຮງຕື່ມໜີ້ຕື່ມເຈັຽ ເຂົ້າໄປຕື່ມ ເມື່ອນາງເມັຽໄດ້ຍິນຜູ້ຜົວ ອອກປາກ ຕອບໂຕ້ ອອກມາຢ່າງນັ້ນ... "*ບັກເຖົ້າຫົວງູ ມຶງບອກກູມາດຽວນີ້ວ່າມຶງໄປຕາຍຫ່າກິນຂອງເບົ່າຂອງບູດ ມາແຕ່ທາງໃດກັນທີ່?*

**-ຜົວຜູ້ໜ້າແຊບ:** ກໍທຳທ່າເຮັດເສີຍໆບໍ່ຕອບບໍ່ໂຕ້ພໍຄຳ ທາງຝ່າຍນາງເມັຽໂຕແສບພັດໄດ້ໃຈແຮງເປັ່ງສຽງແຮງໆຂຶ້ນມາກວ່າເກົ່າສິບເທົ່າ..

**-ເມັຽທີ່ໜ້າຮັກ:** ບັກປາກກືກກູຖາມກູເວົ້າເປັນຫຍັງມຶງຈຶ່ງບໍ່ຕອບກູ ເຮີ້! ກູຮູ້ເນີ ບາດວ່າໂອ້ລົມຢູ່ກັບສາວໆ ແມ່ຮ້າງນາງໝ້າຍ ມຶງພັດຊ່າງຖແລງຊ່າງ ເອາະເຊາະ ອອດອ້ອນເຂົາ ເກັ່ງບໍ່ແມ່ນຂອງຄ່ອຍບໍ່ວ່າ ຈະຢູ່ຕໍ່ໜ້າ ຫລື ລັບຫລັງກູ ບັກຜີຫົວເນົ່າເອີຍ ເຈັບໃຈໆ ອີ່ຫລີ!!!

**-ຜົວຜູ້ໜ້າແຊບ:** ອີ່ເວນ ! ກູປາກກືກແມ່ນດີແລ້ວເດ່ ອັນກູບໍ່ປາກບໍ່ຈາມຶງກະຍັງດ່າຍັງຈົ່ມບໍ່ເລີກບໍ່ແລ້ວເປັນ ດ່າກູແບບໄພລາມທັງຢ່າງນີ້ໃຜຊິກ້າໂຕ້ຕອບມຶງ ອີ່ຫົວຂີ້ປາແດກເອີຍ!!!

**-ເມັຽທີ່ໜ້າຮັກ:**

ເມື່ອໄດ້ຍິນສຽງຜົວ

ໂຕ້ຕອບອອກມາແບບນັ້ນນາງເມັຽພັດແຮງແຄ້ນແຮງເດືອດຢ່າງສຸດຂີດແລະເວົ້າຕໍ່ໄປວ່າ "ບັກເຖົ້າຕາໂລ້ ມຶງຢ່າໄດ້ເວົ້າ ຕລົກຖແລງເຮັດໃຫ້ກູດີໃຈຢູ່ໜີ້ເດີ້ກູບໍ່ໄດ້ສະອອນໃຈນຳມຶງຈັກໜ້ອຍເລີຍຫ່າກິນຫົວມຶງເອີຍ ເຖົ້າຕາໂລ້ !!!

**-ຜົວຜູ້ໜ້າແຊບ:** ກູຕາໂລ້ມັນຈຶ່ງໄດ້



© Laonet Magazine, July 2006

ເຫັນເຕັມຕາ ໄປທ່ຽວກາງຄືນ ກໍບໍ່ຕ້ອງໄດ້ໃສ່ແວ່ນ ຮ່າໆໆໆ

**-ເມັຽທີ່ໜ້າຮັກ:** ບັກປາກກວ້າງປາກປາແດກ ມຶງມາທຳທ່າເວົ້າຫລິ້ນສ້ອຍຢູ່ນີ້ເບາະເອີ້ !!! ບອກກູມາດຽວນີ້ວ່າມຶງໄປທ່ຽວນອນແຊ່ເຢັນຢູ່ນຳອີຫ່າໃດກັນມາແທ້ຫວ໊ະເອີ້???

**-ຜົວຜູ້ໜ້າແຊບ:** ກູປາກກວ້າງມັນຈຶ່ງຄ່ອຍໄດ້ກິນເຂົ້າຫລາຍໆ ກູບໍ່ໃຊ້ປາກມາເວົ້າດ່າ ຄືມຶງຢ່າງນີ້ດອກ ທາງຝ່າຍນາງເມັຽ ໄດ້ຟັງຜົວ ຕອບອອກມາຢ່າງນັ້ນ ກໍຍິ່ງເຫລືອໃຈໄປຕື່ມຕອນນີ້ຄວາມດ່າຄວາມຮ້າຍຜົວພັກເຊາງຕາຂຶ້ນກວ່າເກົ່າຈົນເຮັດໃຫ້ລູກນ້ອຍທັງສອງຄົນທີ່ກຳລັງຫລັບຢູ່ນັ້ນສະເດີດຂຶ້ນມາທັນທີ ສຽງຮ້ອງໄຫ້ກໍດັງຟົດສະນັ່ນເຮືອນ ທາງຝ່າຍຜູ້ເປັນຜົວກໍອົດບໍ່ໄດ້ ຈຶ່ງອອກສຽງດ່າຣະດ່າຮາມອອກໄປໃນທັນທີ...ເລີຍກາຍມາເປັນເມັຽດ່າຜົວປ້ອຍໄປ

**-ຜົວຜູ້ໜ້າແພ:** ອີເວນອີຜີກິນຫົວມຶງ!!! ມຶງຄືມາຮ້ອງແຮງກັງແກ່ ຮູ້ຫລືບໍ່ວ່າລູກໆເຂົາຕື່ນຕົກໃຈຂນາດໃດກັບອີເວນອີຜີກິນຫົວມຶງ !!!

**-ເມັຽທີ່ໜ້າຮັກ:** ຜີໂຕໃດກັບບັກເຖົ້າມາໆໆ ຮີບມາກິນຫົວກູມາກິນດຽວນີ້ໂລດ ຮີບມາກູແຮງຢາກໃຫ້ມັນມາກິນຕັ້ງແຕ່ເຫິງແລ້ວ ບັກເວນ... ຢູ່ໃສກັນຜີກິນຫົວມັນຢູ່ໃສກັນ???

"ຈັງແມ່ນຄັກອີ່ຫລີດອກ ຜູ້ຍິງດຽວນີ້ເກັ່ງສຸດຂີດ ດ່າຜົວປານສາຍຟ້າແລບແລະກໍບໍ່ຢ້ານຜີກິນຫົວເລີຍ.. ຮ່າໆໆເຖຍຍັງທ້າດວນກັບຜີຕື່ມອີກດ້ວຍ ໄອ່ຢາ ອີ້ວສູ້ບໍ່ໄຫວລ້ຽວ ແມ່ ຫລື ເມັຍກັນແທ້ຫວ໊ະ ???ຜູ້ຍິງປະເພດນີ້ ເກັ່ງຈິງໆໂວ້ຍ)



# ບ່າວປາກເຊ ໂທຣະສັພຫາ

## ສາວເມືອງຫລວງ

ໃນສມັຍກ່ອນນັ້ນ ຢູ່ເມືອງລາວມີຫ້ອງການນຶ່ງທີ່ກ່ຽວຂ້ອງກັບການປັບປຸງທາງດ້ານກະສິກັມທີ່ຂຶ້ນກັບກະຊວງກະສິກັມແລະປ່າໄມ້ໂດຍທີ່ຮ້ອງກັນໂດຍຫຍໍ້ໆວ່າ "ອາໂດ້" ແລະພາຍໃນຫ້ອງການແຫ່ງນີ້ກໍມີພະນັກງານຮັບຕ້ອນແລະຜູ້ທີ່ຮັບສາຍກໍເປັນສາວເມືອງຫລວງພຣະບາງທີ່ມີຄວາມງາມຂາວອວບແລະຮູບຮ່າງໜ້າຕາພໍໄປວັດໄປວາໄດ້ ແລະ ສ່ວນອີກດ້ານນຶ່ງທີ່ກົມໄປສະນີ ແລະ ໂທຣະຄົມມະນາຄົມນັ້ນພັດມີອ້າຍບ່າວເມືອງປາກເຊ ໄດ້ເກີດໄປຫລົງມັກຫລົງຮັກສາວເມືອງຫລວງຢູ່ໃນໃຈ ແຕ່ບໍ່ກ້າທີ່ຈະໄປໂອ້ລົມໜ້າຕໍ່ໜ້າລາວຈຶ່ງສວຍໂອກາດນີ້ໃຊ້ທຣະສັພເພື່ອໃຫ້ເປັນສື່ກາງ ແລະຫວັງວ່າຈະໄດ້ມີໂອກາດໂອ້ລົມກັບນ້ອງນາງພໍໃຫ້ຊື່ນໝາກກະດອງໃຈ ແລະ ໃນຕອນເຊົ້າຂອງມື້ນັ້ນຊາຍໜຸ່ມຮູບງາມເມືອງປາກເຊກໍຕັດສິນໃຈຈັບໂທຣະສັພຂຶ້ນມາ ແລະໝູນເລກທີ່ຕ້ອງການໂທເຂົ້າໄປຫາສາວເມືອງຫລວງທີ່ກົມອາໂດ້ໃນທັນທີເພາະເປັນເວລາ ທີ່ຫວ້າງ ຢູ່ພໍ ເໝາະພໍດີ ພໍດີ

**-ບ່າວເມືອງປາກເຊ :** ອາໂດ້ອາໂດ້ ຂໍໂທດ ດ່າຍໆໆເລີ



**-ສາວເມືອງຫລວງ:** ຕອບອອກໄປທັນທີເມື່ອໄດ້ຍິນໃນຄຳວ່າອາໂດ້"ຖືກຕ້ອງແລ້ວນີ້ແມ່ນ ກົມອາໂດ້" ໃຜປາກໝາ !!! (ຄວາມໝາຍຂອງສາວເມືອງຫລວງກໍແມ່ນຢາກຈະຖາມວ່າແມ່ນໃຜກັນປາກມາ?

**-ບ່າວປາກເຊ :** ອ້າວ ອີ່ນາຍນີ້ຖາມທໍ່ນີ້ກະລ່າແລ້ວບໍ່**(ຄວາມໝາຍເວົ້າຊໍ່ານີ້ກໍດ່າເບາະ)**

**-ສາວເມືອງຫລວງ :** ເອີລ່າກໍລ່າ ເທົ່ານີ້ລະເບາະອ້າຍບ່າຍໆໆ (ອັນນີ້ລະເບາະປາກເວົ້າພາສາດຽວກັນແທ້ໆແຕ່ສຳນຽງພັດແຕກຕ່າງກັນໄປນ້ອຍດຽວມັນກໍເລີຍເຮັດໃຫ້ເກີດການເຂົ້າໃຈ ໃນຄວາມໝາຍທີ່ຜິດພ້ຽນໄປ ເປັນຄົນລະຢ່າງ ເວັນກັມ ...ຮ່າໆໆ).